ພັນທະມິດເພື່ອປະຊາທິປະໄຕໃນລາວ
ALLIANCE FOR DEMOCRACY IN LAOS
Alliance pour la Démocratie au Laos

Letmather Str.71, 58119 Hagen, Germany. Phone: 0049( 2334) 44 44 668, E-Mail: alliance-lao@alice.de
www.laoalliance.com

# ຖະແລງການ ພປລ ປະນາມ ຜູ້ນຳ ສູງສຸດ ສປປລາວ ບໍ່ມີຄວາມເປັນຫວ່ງເປັນໄຍຕໍ່ ປະຊາຊົນລາວ ທີ່ກຳລັງໄດ້ຮັບຜົນກະທົບຫນັກຈາກໄພນໍ້າຖ້ວມ

ເຫດການໄພນໍ້າຖ້ວມ ອັນຫນັກຫນ່ວງໃນຫລາຍແຂວງ ທົ່ວປະເທດລາວ ໃນລະດູຝົນ ນັບ ທະວີຂຶ້ນ ທຸກໆປີ ຊຶ່ງບໍ່ໄດ້ເກີດຂຶ້ນ ຈາກໄພທຳມະຊາດ ເທົ່ານັ້ນ ແຕ່ແມ່ນຍ້ອນການ ປ່ອຍນໍ້າ ເຂື່ອນ  ຍ້ອນການສ້າງເຂື່ອນ ທີ່ບໍ່ມີຂອບເຂດ ໂດຍທີ່ບໍ່ມີການຄຳນຶງເຖິງຜົນກະທົບ ແລະ ບໍ່ ຮັບຟັງສຽງຮ້ອງທຸກຂອງປະຊາຊົນ.

ໃນປີ 2025 ນີ້ ໃນປັດຈະບັນ ມີເຫດການ ນໍ້າຖ້ວມ ອັນຮ້າຍ ແຮງ ທີ່ກະທົບເຖິງ 10ແຂວງໃນ ລາວ ຕາມສະຖິຕິ ທາງການເປີດເຜີຍ ວ່າ ມີຜູ້ເສັຽຊີວິດ 4 ຄົນແລະ ມີຜູ້ສູນຫາຍ 4 ຄົນ ແຕ່ ພວກເຮົາຕີລາຄາວ່າໃນຕົວຈິງ ຈະມີຈຳນວນຫລາຍກວ່ານັ້ນ.

ໃນໂອກາດ ທີ່ປະຊາຊົນລາວ ກຳລັງຟາຍນໍ້າຕາ ຮ້ອງໄຫ້ຍ້ອນຄວາມເສັຽຫາຍອັນໃຫຍ່ ຫລວງຢ່າງ ສິນເນື້ອປະດາຕົວສູນເສັຽເຮືອນຊານບ້ານຊ່ອງທົ່ງໄຮ່ທົ່ງນາ ບ່ອນທຳມາຫາກິນ ແທນທີ່ຜູ້ນຳສູງສຸດ ຈະມີຄວາມເປັນຫ່ວງເປັນໄຍ ປະຊາຊົນດ້ວຍການລົງໄປເບິ່ງຄວາມສູນເສັຽ ແລະ ໃຫ້ການຊ່ວຍເຫລືອປະຊາຊົນ ຢ່າງທັນການ ແຕ່ ຜູ້ກຳອຳນາດສູງສຸດ ຂອງສປປລາວ ໂດຍ ແມ່ນ ນາຍົກລັຖະມົນຕຣີ ສອນໄຊ ສີພັນດອນ, ບໍ່ໄດ້ອອກແລງການໃດໆ  ແຕ່ ກົງກັນຂ້າມ ພັດໄປ ສະແດງຄວາມເສັຽໃຈ ຕໍ່ຄວາມສູນເສັຽຈາກໄພນໍ້າຖ້ວມຂອງ ປະຊາຊົນ ວຽດນາມ ນີ້ ເປັນການ ສະແດງໃຫ້ເຫັນວ່າເປັນຜູ້ນຳຮັບໃຊ້ວຽດນາມແລະ  ບໍ່ແມ່ນຜູ້ນຳ ຂອງ ປະຊາຊົນລາວ.

ຍິ່ງໄປກວ່ານັ້ນ ປະທານປະເທດ ສປປລາວທອງລຸນ ສີສຸລິດ   ກໍມິດຫມີ່ ບໍ່ມີ ທ່າທາງອັນໃດ ສະແດງອອກມາໃຫ້ປະຊາຊົນ ເຫັນ ວ່າຜູ້ນຳ ມີຄວາມເປັນຫວ່ງປະຊາຊົນລາວ ທີ່ກຳລັງ ຕົກຢູ່ ໃນສະພາບ ຄັບຂັນ ແຕ່ ກົງກັນຂ້າມ ທ່ານ ທອງລຸນ ສີສູລິດ ກໍກຳລັງເດີນທາງໄປຮ່ວມກອງ ປະຊຸມ ກັບຈອມຜະເດັດການກິມຈົງອຸນ. ທີ່ເກົາຫລີເຫນືອ ອັນເປັນການ ສະແດງໃຫ້ເຫັນວ່າ ຜູ້ນຳເປັນຫວ່ງນຳແຕ່ອຳນາດເທົ່ານັ້ນ.ການຊ່ວຍເຫລືອ ຂອງສາກົນ ຜູ້ກຳອຳນາດໄດ້ນຳໄປ ແບ່ງປັນກັນເອງ ແລະ ບໍ່ໄດ້ນຳໄປຊ່ວຍເຖິງປະຊາຊົນຊົນລາວ ເທົ້າທີ່ຄວນ.

ສປປລ ມີນະໂຍບາຍວ່າຈະສ້າງໃຫ້ເປັນຫມໍ້ໄຟອາຊຽນໃນທີ່ສຸດໄດ້ກາຍເປັນຫມໍ້ນາຮົກ . ດ້ວຍການ ອະນຸມັດໃຫ້ ນາຍທຶນຕ່າງຊາດມສ້າງເຂື່ອນໃນລາວໃນປັດຈຸບັນ ເຖິງ 98 ເຂື່ອນທີ່ ສ້າງໄປແລ້ວໃນນັ້ນ ບໍ່ແມ່ນເປັນເຂືອ່ນຂອງລາວ ແລະ ມີແຜນຈະສ້າງຕໍ່ໄປອີກຫລາຍຮ້ອຍ ເຂືອນ ໃນຊຸມປີຂ້າງຫນ້າ. ບໍ່ພຽງແຕ່ເປັນການຍຶດທີ່ດິນຂອງປະຊາຊົນ ເທົ່ານັ້ນ ຍັງເປັນ ການສວຍໂອກາດຕັດໄມ້ທຳລາຍປ່າ ຢ່າງມະຫາສານ, ລະດູຝົນ ເກີດໄນ້ຳຖ້ວມລະດູແລ້ງ ເກີດ ຄວາມແຫ້ງແລ້ງ ເຮັດໃຫ້ປະຊາຊົນເດືອດຮ້ອນໃນການທຳມາຫາກິນ ການສ້າງ ເຂື່ອນ ມະຫາສານໃນລາວບໍ່ໄດ້ນຳຜົນປະໂຫຍດ ໃຫ້ແກ່ປະຊາຊົນລາວ  ແຕ່ປະຊາຊົນຕ້ອງຈ່າຍຄ່າໄຟ ຟ້ານັບມື້ນັບແພງຂຶ້ນ, ລາຍໄດ້ຈາກການສ້າງເຂື່ອນ ແມ່ນແຕ່ ນາຍທຶນຕ່າງຊາດ ແລະ ຜູ້ກຳ ອຳນາດທີ່ສໍ້ກົງ ແຕ່ບໍ່ໄດ້ນຳເຂົ້າໃນຄັງຂອງລັດເທົ່າທີ່ຄວນ.

ໃນລະດູຝົນກໍ່ມີການລັກປ່ອຍເຂື່ອນຢ່າງກະທັນຫານ ໂດຍບໍ່ມີການແຈ້ງໃຫ້ປະຊາຊົນຊາບກ່ອນຢ່າງທັນ ໂດຍບໍ່ມີການກະກຽມຮັບສະພາບການທັນ ຊຶ່ງເປັນເຫດໃຫ້ມີນໍ້າຖ້ວມຢ່າງກະທັນຫັນ ແລະ ຮ້າຍແຮງ ຈົນປະຊາຊົນ ບໍ່ສາມາດ ຫລົບຫລີກໄພໄດ້. ຍິ່ງໄປກວ່ານັ້ນ ກໍ່ມີເຫດການເຂື່ອນແຕກ ຊຸມປີກ່ອນເປັນຕົ້ນ ແມ່ນ ເຂື່ອນເຊປຽນເຊນໍ້ານ້ອຍ ໂດຍທີ່ປະຊາຊົນບໍ່ໄດ້ຮັບການຊົດເຊີຍຢ່າງເຫມາະສົມ ຍ້ອນມີການສໍ້ລາດບັງຫລວງໃນທຸດຂັ້ນອໍານາດການປົກຄອງ ຈຶ່ງເຮັດໃຫ້ ການຊ່ວຍເຫລືອບໍ່ໄປເຖິງປະຊາຊົນເທົ່າທີ່ຄວນ. ໃນປັດຈຸບັນເຊັ່ນ ການປ່ອຍນໍ້າເຂື່ອນຢ່າງກະທັນຫັນທີ່ເຂື່ອນເຊັ່ນງື່ມນຶ່ງທີ່ພໃຫ້ນໍ້າຖ້ວມຈັນຫລິບຫົວ ຈອມຫລັງຄາເຮືອນ ທີ່ເມືອງ ບໍລິຄໍາໄຊໃນວັນທີ່2ຕຸລາ ກໍ່ມີເຫດການເຂື່ອນແຕກ ທີ່ເຂື່ອນນໍ້າງຽບສອງ ແລະພການປ່ອຍເຂື່ອນນໍ້າເທີນ ໃນວັນທີ່2 ຕຸລາພາໃຫ້ ນໍ້າຂອງລົ້ນແຄມຝັ່ງ ຖ້ວມເມືອງປາກກະດິງ ແຂວງບໍລິຄໍາໄຊຢ່າງຫນັກ ແລະ ໃນແຫ່ງອື່ນໆ.

ພວກເຮົາອົງການ ພປລ ແລະ ປະຊາຊົນລາວຜູຮັກຫອມຄວາມເປັນທັມທວງມາຍັງ ທາງການ ສສປປລາວດັ່ງນີ້

1.ຈົ່ງຢຸດຕິໃນການ ສ້າງເຂື່ອນໄຟຟ້າໃນລາວຢ່າງຮີບດ່ວນຄວນຫັນໄປສ້າງລະບົບທີ່ບໍ່ກະທົບຕໍ່ທໍາມະຊາດ ແລະ ຊີດການເປັນຢູ່ຂອງ ປະຊາຊົນ ເຊັ່ນ ລົບົບພະລັງແສງຕາເວັນ

2.ຈົ່ງໃຫ້ການຊ່ວຍເຫລືອປະຊາຊົນລາວ ທີ່ໄດ້ຮັບຜົນກະທົບຈາກໄພນໍ້າຖ້ວມຢ່າງ ພຽງພໍ ແລະ ທັນການ.

ທີ່ເຢັຽຣະມັນ ວັນທີ່10ຕຸລາ 2025



ດຣ. ບຸນທອນ ຈັນທະລາວົງ-ວີເຊີ

ປະທານ ພັນທະມິດເພື່ອປະຊາທິປະໄຕໃນລາວ


**Office in Germany: Dr. Bounthone Chanthalavong- Wiese,** ADL President, Letmather Str.71, 58119 Hagen, Germany
Phone: +49-2334-44 44 668 or +49 1732930267, E-mail: chanthalavong@aol.com

**Australia:** **Mr.Pheng Sacksady**, Vice -President and regional president, ADL chapter of Australia, 6 Quambone Place,Isabella Plains A.C.T, Phone+61-41 37 66 216, E-mail: pheng.sone52@gmail.com

**Canada:** **Mr.Kambane Anonthisen,** regional president, ADL chapter of Canada, 84 Highgatz Rord Kichener , ONT, Phone: +1-519-58 80 502, E-mail: khambane@hotmail.com

**USA:** **Ms.Khamphene Souvannasane,** regional president, ADL chapter of USA , 3837 Rusty Dell St., Fortworth, TX 76111, Phone:+1-682- 554- 6675 , E-mail: khamhene@yahoo.com.

**France:** **Mr.Bounhom ( Christian) Chantha,** regional president, ADL chapter of France, Phone +33 0628252231, 24 ruedelamare 95650 Puiseux pontoise 95650,E-Mail: chris.chantas@wanadoo.fr

**New Zealand:** **Mr. Somchine Sithivong,** regional president, ADL chapter of New Zeeland**,** 6 Ropata Cres, Lower Hutt. 5010 Wellington,phone: +64- 49 34 86 35, E-Mail: xsittivong24@gmail.com